# ສາເຫດທີ່ມີຜົນຕໍ່ການປະລະການຮຽນຂອງນັກຮຽນຊັ້ນມັດທະຍົມ ຕອນຕົ້ນ ຢູ່ເມືອງບາຈຽງຈະເລີນສຸກ ແຂວງ ຈໍາປາສັກ

ສະໜາມໄຊ ບອຍທອງເຕີຍ[1], ປອ ແສງສຸລິຍາ ຈັນທະນາຄອນ[2], ສົມຈິດ ວົງພະຈັນ[3], ສຸດສະດາພອນ ສິງສີທາ[4]
*ສາຂາວິຊາວິທະຍາສາດການສຶກສາ ຄະນະສຶກສາສາດ ມະຫາວິທະຍາໄລຈໍາປະສັກ*

**ບົດຄັດຫຍໍ້**

ການຄົ້ນຄວ້າຄັ້ງນີ້ມີຈຸດປະສົ່ງເພື່ອ (1) ເພື່ອສຶກສາຫາສາເຫດມີທີ່ຜົນຕໍ່ການປະລະການຮຽນຂອງນັກຮຽນມັດທະຍົມຕອນຕົ້ນຢູ່ເມືອງບາຈຽງຈະເລີນສຸກ (2) ເພື່ອຊອກຫາແນວທາງການແກ້ໄຂບັນຫາການປະລະການຮຽນຂອງນັກຮຽນມັດທະຍົມຕອນຕົ້ນຢູ່ເມືອງບາຈຽງ ຈະເລີນສຸກ.

ການດໍາເນີນການຄົ້ນຄວ້າລະຫວ່າງວັນທີ 12 ຕຸລາ 2022 ເຖິງວັນທີ 31 ພຶດສະພາ 2023 ກຸ່ມຕົວຢ່າງທີ່ໃຊ້ໃນການສຶກສາ ປະກອບດ້ວຍນັກຮຽນທີ່ປະລະການຮຽນຈໍານວນ 52 ຄົນ, ຜູ້ຄົ້ນຄວ້າໄດ້ລົງສໍາຫຼວດເກັບຂໍ້ມູນນໍາທ່ານຜູ້ອໍານວຍການໂຮງຮຽນ ແລະ ໄດ້ລົງຢາຍຮ່າງສໍາຫຼວດໃຫ້ນັກຮຽນທີ່ປະລະການຮຽນໃນຂັ້ນບ້ານ ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າ ຄື ແບບສອບຖາມຄວາມຄິດເຫັນກ່ຽວກັບສາເຫດທີ່ມີຜົນຕໍ່ການປະລະການຮຽນຂອງນັກຮຽນ ມີລັກສະນະເປັນແບບມາດຕາສ່ວນປະມານຄ່າ 5 ລະດັບ ແລະ ໄດ້ເກັບລວບລວມຂໍ້ມູນມາວິເຄາະໂດຍໃຊ້ໂປແກຣມ Excel ເພື່ອຊອກຫາຄ່າສະຖິຕິເຊັ່ນ: ຄິດໄລ່ເປັນເປີເຊັນ, ຫາຄ່າສະເລ່ຍ (Mean) ແລະຄ່າຜັນປ່ຽນມາດຕະຖານ (Standard Deviation: SD).

ຜົນການຄົ້ນຄວ້າພົບວ່າ: ສາເຫດທີ່ມີຜົນຕໍ່ການປະລະການຮຽນຂອງນັກນັກຮຽນຊັ້ນມັດທະຍົມຕອນຕົ້ນຢູ່ເມືອງບາຈຽງຈະເລີນສຸກ ແຂວງຈໍາປາສັກ ໃນ 5 ດ້ານພົບວ່າ ດ້ານ ຜູ້ຮຽນ ແລະ ດ້ານສະພາບແວດລ້ອມໃນສະຖານທີ່ການສຶກສາມີຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຖານ ສູງກ່ວາໝູ່ ($\overline{X} = 3.29$) ;($SD = 0,60$) ແລະ ($\overline{X} = 3.29$) ; ($SD = 0.66$) ຈັດຢູ່ໃນລະດັບປານກາງ, ຮອງລົງມາແມ່ນດ້ານ ອາຈານຜູ້ສອນມີຄ່າສະເລ່ຍ ແລະຄ່າຜັນປ່ຽນມາດຖານແມ່ນ ($\overline{X} = 2.44$) ແລະ($SD = 0,64$) ຈັດຢູ່ໃນລະດັບໜ້ອຍ, ດ້ານມີຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຖານໜ້ອຍກວ່າໝູ່ແມ່ນດ້ານສັງຄົມ($\overline{X} = 2.06$) ແລະ ($SD = 0.55$) ຈັດຢູ່ໃນລະດັບໜ້ອຍ.

**ຄໍາສັບສໍາຄັນ:** ການປະລະການຮຽນ, ແນວທາງການແກ້ໄຂບັນຫາ, ນັກນັກຮຽນຊັ້ນມັດທະຍົມຕອນຕົ້ນ.

---

[1] *ນັກສຶກສາປະລິນຍາໂທ,_ຄະນະສຶກສາສາດ , ມະຫາວິທະຍາໄລ ຈໍາປາສັກອີເມວ:* Sanamsaipakse993@gmail.com
[2] *ຫ້ອງການຄົ້ນຄວ້າວິທະຍາສາດ ແລະ ບໍລິການວິຊາການ ມະຫາວິທະຍາໄລ ຈໍາປາສັກ*
[3] *ຄະນະສຶກສາສາດ ມະຫາວິທະຍາໄລ ຈໍາປາສັກ*
[4] *ຫ້ອງການຄົ້ນຄວ້າວິທະຍາສາດ ແລະ ບໍລິການວິຊາການ ມະຫາວິທະຍາໄລ ຈໍາປາສັກ*

# Reasons affecting the dropout of secondary school students in Bachiangchaluensouk District, Champasak Province

Sanamxay BOYTHONGTEUY[1], Sengsouliya CHANTHANAKHONE[2], Somecit VONGPHACHANH[3], Soudsadaphone SINGSETHA[4]

*Faculty of Education, Champasack University*

**Abstract**

The purpose of this research is to (1) to study the causes that affect the dropout of junior high school students in Ba Chiang Charoen Souk district (2) to find ways to solve the problems of high school student dropout in Ba Chiang Charoen Suk district.

Conducting research between October 12, 2022 and May 31, 2023. The sample group used in the study consists of 52 students who drop out of school. The researcher conducted a survey to collect data with the school principal and distributed the survey to students who dropped out at home. To find statistical values such as percentages, mean and standard deviation (SD).

The results of the research found that: the causes that affect the dropout of middle school students in Ba Chiang Charoen Suk District, Champasak Province, in 5 aspects, it was found that the student aspect and the environment aspect in the place of education have the average value and the standard deviation value higher than their peers $(\overline{X} = 3.29)$ ; $(SD = 0,60)$ and $(\overline{X} = 3.29)$ ; $(SD = 0.66)$ ranked in the middle level, followed by the teacher's aspect, the average value and the standard deviation value is $(\overline{X} = 2.44)$ and $(SD = 0,64)$ is placed at a low level, the aspect with the average value and the standard deviation value is less than the others, is the social aspect $(\overline{X} = 2.06)$ and $(SD = 0.55)$ is placed at the low level.

**Keywors:** Reasons affecting the dropout of secondary school students in BaChiang Chaluen Souk District, Champasak Province

ສະໜາມໄຊ ບອຍທອງເຕີຍ ຄະນະສຶກສາດ ສາຂາວິທະຍາສາດການສຶກສາ ສັງກັດ: ໂຮງຮຽນ ມສ ແກ້ງເກ່ຍ,

[1] *Master student, Faculty of Education, Champasack University Emila:* Sanamsaipakse993@gmail.com
[2] *Scientific Research and Academic Service Office, Champasack University.*
[3] *Faculty of Education, Champasack University*
[4] *Faculty of Education, Champasack University*

### 1. ພາກສະເໜີ (problem statement )

ການສຶກສາຖືວ່າເປັນພື້ນຖານທີ່ສຳຄັນທີ່ສຸດໃນການພັດທະນາ ແລະ ບໍລິຫານປະເທດໃຫ້ທ່ອງທັນກັບນາໆປະເທດທົ່ວໂລກທີ່ກຳລັງແຂ່ງຂັນກັນຢູ່ໃນທຸກໆດ້ານທັງໃນເລື່ອງເສດຖະກິດການເມືອງສິ່ງແວດລ້ອມຊັບພະຍາກອນທຳມະຊາດ ຫລື ແມ່ນແຕ່ຊັບພະຍາກອນມະນຸດ ສິ່ງ ເຫຼົ່ານີ້ ລ້ວນແລ້ວແຕ່ຕ້ອງອາໄສພື້ນຖານທາງການສຶກສາເປັນປັດໄຈຫຼັກເພື່ອທີ່ຈະນຳໄປສູ່ການບັນລຸເປົ້າໝາຍທີ່ແທ້ຈິງ ໃນການພັດທະນາ ແລະ ບໍລິຫານປະເທດຢ່າງຍັ່ງຢືນເຊິ່ງສອດຄ່ອງກັບ ວິໄສທັດລັດຖະບານ ຮອດປີ 2030 ພົນລະເມືອງລາວທຸກຄົນໄດ້ຮັບການສຶກສາທີ່ມີຄຸນນະພາບຢ່າສະເໝີພາບ ແລະ ເທົ່າທຽມກັນ ເພື່ອໃຫ້ເຂົາເຈົ້າໄດ້ພັດທະນາຕົນເອງກາຍເປັນພົນລະເມືອງດີຂອງຊາດ, ມີຄຸນສົມບັດ, ມີສຸຂະພາບເຂັ້ມແຂງ, ມີຄວາມຮູ້ຄວາມສາມາດສູງ, ມີຄວາມເປັນມືອາຊີບເພື່ອພັດທະນາປະເທດຊາດໃຫ້ສີວິໄລຍົນຍົງສາມາດເຊື່ອມໂຍງ, ແຂ່ງຂັນກັບພາກພື້ນ ແລະ ສາກົນໄດ້ (ວິໄສທັດຮອດປີ 2030 ຍຸດທະສາດຮອດປີ 2030 ແລະ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີຄັ້ງທີ VIII 2015: 9).

ຈາກວິໄສທັດການພັດທະນາການສຶກສາລັດຖະບານໄດ້ວາງຍຸດທະສາດວ່າດ້ວຍການພັດທະນາຊັບພະຍາກອນມະນຸດ ເຊິ່ງໄດ້ອອກຂໍ້ກຳນົດ (ຂໍ້3) ຂອງວຽກງານຈຸດສຸມຄື: ປັບປຸງ ແລະ ປະຕິຮູບການສຶກສາ ເນັ້ນໃສ່ການປັບປຸງຫຼັກສູດການຮຽນ-ການສອນ, ການພັດທະນາສີມືແຮງງານຂອງຜູ້ປະກອບການ, ຂະແໜງເສດຖະກິດຕ່າງໆ ແລະ ສະຖາບັນການສຶກສາໃນພາກພື້ນ,ສະໜອງພື້ນຖານໂຄງລ່າງທີ່ຈຳເປັນເພື່ອຮັບໃຊ້ການຮຽນ-ການສອນ, ຂະຫຍາອັດຕາການປົກຄຸມຂອງຕາໜ່າງການສຶກສາ ແລະ ການພັດທະນາສີມືແຮງງານ ໂດຍເລັ່ງໃສ່ໄວໜຸ່ມ, ແມ່ຍິງ ແລະ ປະຊາຊົນບັນດາເຜົ່າຜູ້ດ້ອຍໂອກາດ ແລະ ຂະຫຍາຍການສຶກສາຂອງເດັກກ່ອນໄວຮຽນໃຫ້ກວ້າງຂວາງ ແລະ ມີປະສິດທິພາບສູງ, ເອົາໃຈໃສ່ພິເສດໃນການລົງທຶນໃສ່ເດັກນ້ອຍຜູ້ດ້ອຍໂອກາດຢູ່ຊົນນະບົດ ແລະ ເດັກນ້ອຍທີ່ມີພອນສະຫວັນຈາກກຸ່ມປະຊາກອນທີ່ດ້ອຍໂອກາດ.

ນອກຈາກນັ້ນ,ການສຶກສາເປັນປັດໄຈສຳຄັນໃນການພັດທະນາຊັບພະຍາກອນມະນຸດເນື່ອງຈາກການສຶກສາສາມາດຊ່ວຍໃຫ້ບຸກຄົນມີຄວາມຮູ້ທາງດ້ານວິຊາການ ສາມາດນຳມາປະກອບອາຊີບລ້ຽງຕົນເອງໄດ້ຊຶ່ງເປັນວິທີການ ຍົກລະດັບຄຸນນະພາບຊີວິດໃຫ້ມີຄວາມເປັນຢູ່ທີ່ດີຂຶ້ນ ແລະ ຍັງເປັນປັດໄຈສຳຄັນໃນການພັດທະນາປະເທດອີກ, ນອກຈາກນີ້ການສຶກສາຍັງສາມາດຊ່ວຍພັດທະນາບຸກຄົນໃຫ້ເປັນຜູ້ທີ່ມີຄຸນນະພາບດ້ານພຶດຕິກຳ ມາລະຍາດທາງສັງຄົມ, ຄວາມຄິດ, ທັດສະນະຄະຕິ ຫລື ບຸກຄະລິກກະພາບ ຈະເຫັນໄດ້ວ່າການສຶກສາຄືພື້ນຖານສຳຄັນຢ່າງຍິ່ງໃນການພັດທະນາປະເທດ.

ການສຶກສາ ການຮຽນຮູ້ນັ້ນ ແມ່ນມີຄວາມສຳຄັນຕໍ່ຄົນເຮົາຕັ້ງແຕ່ອາດີດຈົນເຖິງປັດຈຸບັນເພາະວ່າເມື່ອຄົນເກີດມີການຮຽນຮູ້ຂຶ້ນມານັ້ນ ຄົນເຮົາກໍ່ໄດ້ນຳສິ່ງທີ່ໄດ້ຮຽນຮູ້ນັ້ນມາກາຍເປັນອົງຂອງຄວາມຮູ້ທີ່ສາມມາດສ້າງສັນສິ່ງຕ່າງໆ ອອກມາເປັນຮູບປະທຳ ເຊັ່ນ: ສິ່ງກໍ່ສ້າງ ສັງຄົມ ອະລິຍະທຳຕ່າງໆເຮັດໃຫ້ຄົນເຮົານັ້ນມີຊີວິດຢູ່ເທິງໜ້າໂລກນີ້ໄດ້ຢ່າງສະດວກສະບາຍ ແລະ ມີລະບຽບແບບແຜນ ຍິ່ງອົງຄວາມຮູ້ພັດທະນາກ້າວໄກຫຼາຍຂຶ້ນ ກໍ່ສາມາດເຮັດໃຫ້ແນວຄວາມຄິດຂອງຄົນເຮົານັ້ນມີການພັດທະນາໄປເລື້ອຍໆ ແຕ່ການທີ່ຄົນເຮົາຈະສາມາດຮຽນຮູ້ພັດທະນາ ສ້າງສັນ ສິ່ງຕ່າງໆຂຶ້ນມາໄດ້ນັ້ນຕ້ອງອາໄສອົງປະກອບຫຼາຍຢ່າງເຂົ້າມາຊ່ວຍເພີ່ມຍູ້ດັນໃຫ້ເກີດແຮງຈູງໃຈບໍ່ວ່າຈະເປັນຈິດໃຈຊອກຮູ້ບັນຫາທີ່ເກີດຂຶ້ນ ຈິນຕະນາການ ຄວາມເຊື່ອ ລວມໄປເຖິງທັດສະນະຄະຕິ ເບິ່ງໄປແລ້ວແມ່ນມີຄວາມສຳຄັນຢ່າງຫຼວງຫຼາຍຕໍ່ການສ້າງສັນ ການຮຽນຮູ້ຂອງຄົນເຮົາເພາະເມື່ອຄົນເຮົາມີທັດສະນະຄະຕິທີ່ດີຕໍ່ສິ່ງໃດສິ່ງໜຶ່ງ

ແລ້ວກໍ່ສາມາດໃຊ້ເປັນຈຸດເລີ່ມຕົ້ນ ໃນການຄົ້ນຄວ້າຄວາມສົນໃຈທີ່ນຳໄປສູ່ການສ້າງສັນສິ່ງດີໆໃຫ້ກັບຕົນເອງ ຄອບຄົວ ສັງຄົມ ແລະ ປະເທດຊາດ. ໃນທາງກົງກັນຂ້າມຖ້າຫາກວ່າຄົນເຮົາມີທັດສະນະຄະຕິຕໍ່ສິ່ງໃດສິ່ງໜຶ່ງ ໃນດ້ານລົບແລ້ວ ຄົນເຮົາກໍ່ຈະເປັນຜູ້ທຳລາຍ ສິ່ງຕ່າງໆຈາກທັດສະນະຄະຕິ ແລະ ຄວາມເຊື່ອຂອງຕົນເອງ ໂດຍຂະຫຍາຍທັດສະນະຄະຕິຄວາມເຊື່ອມໄປສູ່ກຸ່ມບຸກຄົນທີ່ດ້ອຍຕາມອັນນຳໄປສູ່ການສູນເສຍຂອງສິ່ງຕ່າງໆໃນອະນາຄົດໄດ້. ເພາະສະນັ້ນຈະເຫັນໄດ້ວ່າ ການທີ່ນັກຮຽນ-ນັກສຶກສາ ຈະສາມາດຮຽນຈົນຈົບການສຶກສາໄດ້ນັ້ນຈະຕ້ອງໄດ້ອາໄສບຸກຄົນຫຼາຍຄົນທີ່ກ່ຽວຂ້ອງກັບການສຶກສາ ໂດຍສະເພາະ ແມ່ນຄູບາອາຈານ ຜູ້ປົກຄອງໝູ່ຮ່ວມຊັ້ນຮຽນດຽວກັນ ສັງຄົມທີ່ຢູ່ອາໄສຕະຫຼອດຈົນເຖິງຕົວຂອງນັກຮຽນ-ນັກສຶກສາເອງທີ່ຈະຕ້ອງໄດ້ໃຫ້ຄວາມຮ່ວມມືໃນການສຶກສາໃຫ້ສຳເລັດລຸລ່ວງໄປດ້ວຍດີ ໃນການດູແລເບິ່ງແຍງນັກສຶກສາແມ່ນ ໜ້າທີ່ຂອງບຸກຄົນຫຼາຍຝ່າຍທີ່ຈະຕ້ອງໄດ້ຊ່ວຍກັນຊອກຫາແນວທາງໃນການແກ້ໄຂບັນຫາກ່ຽວກັບພຶດຕິກຳຂອງນັກຮຽນໃນລະຫວ່າງການຮຽນ ເປັນຕົ້ນແມ່ນ ການຂາດຮຽນຂອງນັກຮຽນ ກໍ່ອາດຈະສົ່ງຜົນກະທົບຕໍ່ນັກຮຽນ ໃນຂະບວນການຮຽນຮູ້ ການສອນ ແລະ ສົ່ງຜົນກະທົບເຖິງຜູ້ປົກຄອງ ຄູ-ອາຈານພາຍໃນໂຮງຮຽນ ສົ່ງຜົນກະທົບຕໍ່ສັງຄົມ ແລະ ເກີດບັນຫາອື່ນໆຕາມມາໄດ້ໃນພາຍຫຼັງ ໄດ້ແກ່: ບັນຫາຢາເສບຕິດ , ກຸ່ມແກ່ງອັດຕະພານ, ມົ້ວສຸມສິ່ງບໍ່ດີ, ການຕິດເກມ ແລະ ບັນຫາການທີ່ປະພຶດແຂງກະດ້າງເປັນຕົ້ນ ( ສຸພາບ ກາລະປລູກ , 2011 )

ໃນປະຈຸບັນນີ້, ເຖິງວ່າໃນໄລຍະຜ່ານມາທັງພາກລັດ, ເອກະຊົນ ແລະ ຄູ່ຮ່ວມພັດທະນາ ໄດ້ເອົາໃຈໃສ່ຊຸກຍູ້ສົ່ງເສີມ ແລະ ປັບປຸງຄຸນນະພາບການສຶກ ສາໃນຊັ້ນມັດທະຍົມຕົ້ນຢ່າງໜັກໜ່ວງກໍ່ຕາມ, ແຕ່ຈາກຂໍ້ມູນສະຖິຕິເຫັນໄດ້ວ່າການສຶກສາໃນຊັ້ນມັດທະຍົມ ຕົ້ນກຳລັງພົບຄວາມທ້າທາຍສູງ ໂດຍສະເພາະແມ່ນທາງດ້ານ ປະສິດທິພາບພາຍໃນ ໃນການຄຸ້ມຄອງການສຶກສາ. ຈາກສະຖິຕິເຫັນໄດ້ວ່າອັດຕາຄ້າງຫ້ອງ ແລະ ອັດຕາປະລະໃນຊັ້ນມັດທະຍົມຕົ້ນມີທ່າອ່ຽງເພີ່ມຂຶ້ນອັນເປັນສາເຫດເຮັດໃຫ້ ອັດຕາລອດເຫຼືອຮອດ ມ.4 ແລະ ອັດຕາຈົບຊັ້ນ ມ.4 ຫຼຸດລົງເຊິ່ງເປັນສິ່ງທ້າທາຍຫຼາຍຕໍ່ການບັນລຸຄາດໝາຍ 4.1 ຂອງເປົ້າໝາຍພັດທະນາແບບຍືນຍົງ. ໃນສົກ ຮຽນ 2019-2020, ອັດຕາປະລະໃນຊັ້ນມັດທະຍົມຕອນຕົ້ນ ໄດ້ເພີ່ມຈາກ 9,5% ເປັນ 10,3% ແລະ ໃນຂັ້ນ ມ.1 ເພີ່ມຈາກ 11,3% ເປັນ 12,3%. ຈາກຕາຕະລາງສະຖິຕິທີ10 (ສູນສະຖິຕິການສຶກສາ ແລະ ກິລາ) ມີ6 ແຂວງ ທີ່ມີອັດຕາປະລະຊັ້ນ ມັດທະຍົມຕົ້ນຫຼຸດລົງ ແລະ ມີ12 ແຂວງທີ່ມີອັດຕາດັ່ງກ່າວເພີ່ມຂຶ້ນເມື່ອທຽບໃສ່ສົກຮຽນຜ່ານມາ. ເມື່ອເບິ່ງຂໍ້ມູນໃນລະດັບເມືອງເຫັນໄດ້ວ່າມີ 84 ເມືອງທີ່ມີອັດຕາປະລະເພີ່ມຂຶ້ນເຊິ່ງໃນນັ້ນມີ 19 ເມືອງນອນໃນ40ເມືອງດ້ອຍໂອກາດທາງການສຶກສາ ເມືອງທີ່ມີອັດຕາປະລະເພີ່ມຂຶ້ນຫຼາຍທີ່ສຸດຄືເມືອງລ້ອງແຈ້ງແຂວງໄຊສົມບູນ (ຈາກ 4,7% ເປັນ 14,2%) ແລະ ເມືອງໄຊຈຳພອນ ແຂວງບໍລິຄຳໄຊ (ຈາກ 15,8% ເປັນ 24,3%) ເຊິ່ງທັງສອງເມືອງນອນຢູ່ ໃນ 40 ເມືອງບູລິມະສິດ. ແຂວງຈຳປາສັກກໍ່ແມ່ນເມືອງບາຈຽງຈະເລີນສຸກ ເປັນເມືອງໜຶ່ງທີ່ນອນໃນ40ເມືອງບູລິມະສິດນັ້ນ. (ບົດສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາ ການສຶກສາ ແລະ ກິລາ ປະຈຳສົກຮຽນ 2019-2020 ແລະ ແຜນພັດທະນາການສຶກສາ ແລະ ກິລາ ປະຈຳສົກຮຽນ 2020-2021 : 28).

ອີງຕາມ ສະຖິຕິຈຳນວນນັກຮຽນມັດທະຍົມຕອນຕົ້ນມີການປ່ຽນແປງເຊັ່ນປີ2016ມີນັກຮຽນມັດທະຍົມຕອນຕົ້ນຈຳນວນ 36568 ຄົນ, ປີ2017ມີນັກຮຽນມັດທະຍົມຕອນຕົ້ນຈຳນວນ 38336 ຄົນ, ປີ2020ມີນັກຮຽນມັດທະຍົມຕອນຕົ້ນຈຳນວນ 35026 ຄົນ. ສະຖິຕິຈຳນວນນັກຮຽນປະລະ

ມັດທະຍົມຕອນຕົ້ນມີລັກສະນະເພີ່ມຂຶ້ນເຊັ່ນ: ປີ 2016ມີຈຳນວນນັກຮຽນປະລະ 3254 ຄົນ, ປີ2017 ມີຈຳນວນນັກຮຽນປະລະ 3259 ຄົນ, ປີ2020 ມີຈຳນວນນັກຮຽນປະລະ 4463 ຄົນ. ອັດຕາປະລະມີລັກສະນະເພີ່ມຂຶ້ນເຊັ່ນ ປີ2016 ອັດຕາປະລະ8.9%, ປີ2018 ອັດຕາປະລະ 10.9%,ປີ2020 ອັດຕາປະລະ 12.8%ແຫ່ງຂໍ້ມູນ:ບົດສະຫຼູບແລະ ແຜນການພະແນກສຶກສາທິການ ແລະ ກິລາ ແຂວງ ຈຳປາສັກ (2016-2020).

ສະຖິຕິນັກຮຽນມັດທະຍົມຕອນຕົ້ນຢູ່ເມືອງບາຈຽງຈະເລີນສຸກມີການປ່ຽນແປງຄືປີ2017ມີນັກຮຽນມັດທະຍົມຕອນຕົ້ນຈຳນວນ 3232 ຄົນ, ປີ2018ມີນັກຮຽນມັດທະຍົມຕອນຕົ້ນຈຳນວນ 3111 ຄົນ, ປີ 2021 ມີນັກຮຽນມັດທະຍົມຕອນຕົ້ນຈຳນວນ 2743 ຄົນ. ສະຖິຕິຈຳນວນນັກຮຽນປະລະມັດທະຍົມຕອນຕົ້ນມີລັກສະນະເພີ່ມຂຶ້ນເຊັ່ນ: ປີ2017ມີຈຳນວນນັກຮຽນປະລະ 100 ຄົນ, ປີ2018ມີຈຳນວນນັກຮຽນປະລະ 101 ຄົນ, ປີ2021 ມີຈຳນວນນັກຮຽນປະລະ 318 ຄົນ. ອັດຕາປະລະມີລັກສະນະເພີ່ມຂຶ້ນ ເຊັ່ນ ປີ 2017 ອັດຕາປະລະມັດທະຍົມຕົ້ນ 3.09%, ປີ2019 ອັດຕາປະລະ 12%, ປີ2021 ອັດຕາປະລະ 11.6% (ບົດສະຫຼຸບ ແລະ ແຜນການຫ້ອງການສຶກສາທິການ ແລະ ກິລາເມືອງ ບາຈຽງ ຈຳປາສັກ2017-2021)

ດັ່ງນັ້ນ, ການສຶກສາມີຄວາມສຳຄັນຫຼາຍຕໍ່ການພັດທະນາປະເທດຊາດໃຫ້ຈະເລີນຮຸ່ງເຮືອງ, ເພາະການສຶກສາເປັນຂະບວນການສຳຄັນໃນການພັດທະນຊັບພະຍາກອນມະນຸດໃຫ້ສອດຄ່ອງກັບສະພາບສັງຄົມປະຈຸບັນ ແລະສາມາດນຳຄວາມຮູ້ຄວາມສາມາດ ແລະ ທັກສະໄປປະຍຸກໃຊ້ ຫລື ປັບປ່ຽນພຶດຕິກຳໃນການປະກອບອາຊີບ ຊ່ວຍແກ້ໄຂບັນຫາຕ່າງໆ ໃຫ້ລຸລ່ວງ ຢ່າງມີຄຸນນະພາບຊ່ວຍໃຫ້ສາມາດດຳລົງຊີວິດຢູ່ໃນສັງຄົມຢ່າງມີຄວາມສຸກ, ການສຶກສາຈຶ່ງເປັນການສ້າງຄົນເພື່ອ ນຳໄປສູ່ການພັດທະນາປະເທດຊາດທີ່ໝັ້ນຄົງ ແລະ ຍັ່ງຢືນ. ແຕ່ຖ້ານັກຮຽນມີການປະລະການຮຽນເປັນຈຳນວນຫຼວງຫຼາຍກໍ່ຈະມີຜົນກະທົບຕາມມາຂອງສັງຄົມບໍ່ວ່າດ້ານເສດຖະກິດ, ດ້ານການເມືອງ, ດ້ານສັງຄົມ, ດ້ານວັດທະນະທຳ ແລະ ອື່ນໆຈາກບັນຫາດັ່ງທີ່ໄດ້ກ່າວມາຂ້າງເທິງຜູ້ວິໄຈຈຶ່ງໄດ້ສົນໃຈສຶກສາບັນຫາປັດໄຈທີ່ມີຜົນຕໍ່ການປະການຮຽນຂອງນັກຮຽນມັດທະຍົມຕອນຕົ້ນຢູ່ເມືອງບາຈຽງ ຈະເລີນສຸກ ແຂວງ ຈຳປາສັກ ເພື່ອຜົນການວິໄຈຈະເປັນຜົນປະໂຫຍດ ຕໍ່ຜູ້ບໍລິຫານ ຄູຜູ້ສອນໃນການບໍລິຫານຈັດການ ແລະ ຈັດການຮຽນ-ການສອນໃຫ້ມີປະສິດທິພາບດີຍິ່ງຂຶ້ນ, ອີກດ້ານໜຶ່ງເພື່ອເປັນການລົດຈຳນວນອັດຕາການປະລະການຮຽນຂອງນັກຮຽນລົງອີກໃນຕໍ່ໜ້າດ້ວຍເຫດທີ່ກ່າວມາຂ້າງເທິງຂ້າພະເຈົ້າມີຄວາມສົນໃຈສຶກສາຄົ້ນຄວ້າໃນບັນຫາຫົວຂໍ້: ປັດໃຈທີ່ມີຜົນຕໍ່ການປະລະການຮຽນຂອງນັກຮຽນມັດທະຍົມຕອນຕົ້ນຢູ່ເມືອງບາຈຽງຈະເລີນສຸກໂດຍມີຄຳຖາມ ແລະ ຈຸດປະ ສົງໃນການຄົ້ນຄວ້າດັ່ງລຸ່ມນີ້:

**2. ຄຳຖາມຄົ້ນຄວ້າ**

1. ບັນຫາການປະລະການຮຽນຂອງນັກຮຽນໃນຊັ້ນມັດທະຕອນຕົ້ນຢູເມືອບາຈຽງຈະເລີນສຸກບັນຫາໃດເປັນບັນຫາຕົ້ນຕໍ?

2. ວິທີການໃນການແກ້ໄຂບັນຫາການປະລະການຮຽນຂອງນັກຮຽນມັດທະຕອນຕົ້ນຢູ່ເມືອງບາຈຽງຈະເລີນສຸກຄວນເຮັດແນວໃດ?

**3.ຈຸດປະສົງຂອງການວິໄຈ**

1. ເພື່ອສຶກສາຫາສາຍເຫດມີທີ່ຜົນຕໍ່ການປະລະການຮຽນຂອງນັກຮຽນມັດທະຍົມຕອນຕົ້ນຢູ່ເມືອງບາຈຽງຈະເລີນສຸກ

2. ເພື່ອຊອກຫາແນວທາງການແກ້ໄຂບັນຫາການປະລະການຮຽນຂອງນັກຮຽນມັດທະຍົມຕອນຕົ້ນຢູ່ເມືອງບາຈຽງ ຈະເລີນສຸກ

**2.ວິທີການຄົ້ນຄວ້າ Methods**

ການສຶກສາ " ສາເຫດທີ່ມີຜົນຕໍ່ການປະລະການຮຽນຊັ້ນມັດທະຍົມຕອນຕົ້ນຢູ່ເມືອງບາຈຽງຈະເລີນສຸກ" ແມ່ນການສຶກສາແບບສຳຫລວດ ໂດຍວິເຄາະສະຖິຕິດ້ານປະລິມານ ໂດຍການນຳໃຊ້ແບບສອບຖາມແບບປາຍປິດເປັນສ່ວນໃຫຍ່. ການສຶກສາເລີ່ມຈາກຊອກຫາແນວຄິດທິດສະດີ ແລະ ບົດຄົ້ນຄວ້າທີ່ກ່ຽວຂ້ອງແລ້ວເລືອກວິທີການສຶກສາໄປຕາມຂັ້ນຕອນ ໂດຍໄດ້ສຶກສາ ຄື: ດ້ານຜູ້ຮຽນ, ດ້ານຄອບຄົວ,ດ້ານຄູສອນ, ດ້ານສະພາບແວດລ້ອມ ແລະ ດ້ານ ສັງຄົມ. ເຊິ່ງໄດ້ກຳນົດຂັ້ນຕອນໃນການດຳເນີນການຄົ້ນຄວ້າ.ໂດຍໃຊ້ວິທີທາງສະຖິຕິໃນການວິເຄາະຂໍ້ມູນ ດັ່ງຕໍ່ໄປນີ້:

ວິເຄາະຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ ໄດ້ແກ່: ເພດ, ລະດັບການສຶກສາ, ສົກປີ, ທີ່ຢູ່ອາໄສ, ສະຖານະພາບຂອງພໍ່ແມ່,ອາຊີບຂອງພໍ່ແມ່, ລາຍໄດ້ສະເລ່ຍຂອງພໍ່ແມ່.ສະຖິຕິຄ່າຄວາມຖີ່ (Frequency) ແລະ ຄ່າສ່ວນຮ້ອຍ (Percentage).

ວິເຄາະຂໍ້ມູນກ່ຽວກັບຂໍ້ຄິດເຫັນກ່ຽວກັບສາເຫດການປະລະການຮຽນຂອງນັກຮຽນສະຖິຕິຄ່າສະເລ່ຍ($\bar{x}$)
ແລະ ຄ່າຜັນປ່ຽນມາດຕະຖານ ( S.D )

**ກຸ່ມຕົວຢ່າງ**

ກຸ່ມຕົວຢ່າງທີ່ໃຊ້ໃນການວິໄຈຄັ້ງນີ້ໄດ້ຄັດເລືອກເອົາພະນັກງານຄູ-ອາຈານຈຳນວນ 14 ທ່ານ ຜູ້ອຳນວຍການຈຳນວນ 7 ທ່ານ ແລະ ນັກຮຽນທີ່ປະລະການຈຳນວນ 52 ຄົນ , ລວມທັງໝົດ 73 ຄົນ.

ສຳລັບນັກຮຽນທີ່ປະລະການຮຽນແມ່ນໃຊ້ຮູບແບບ (Accidental Random Sampling) ຄື: ວິທີການຍ່າງສຳຫຼວດເວລາພົບຜູ້ໃດທີ່ເປັນນັກຮຽນປະລະການຮຽນແມ່ນໄດ້ຂໍອະນຸຍາດສອບສຳພາດຢາຍແບບສອບຖາມຂໍຄວາມຊ່ວຍເຫຼືອໃຫ້ເຂົາເຈົ້າຕອບແບບສອບຖາມ

**ພັດທະນາເຄື່ອງມື**

ເຄື່ອງມືທີ່ໃຊ້ເຂົ້າໃນການເກັບຂໍ້ມູນແມ່ນແບບເຄິ່ງໂຄງສ້າງ, ຄືແບບຄຳຖາມປາຍເປີດ ແລະ ແບບປາຍປິດໂດຍຜູ້ສຳພາດກຳນົດປະເດັນຄຳຖາມເລື່ອງທີ່ວິໄຈຫຼືຂໍ້ມູນທີ່ກຽມໄວ້ລ່ວງໜ້າຄື:

<u>ແບບສຳພາດ:</u> ສຳພາດອາຈານຜູ້ສອນຂອງຊັ້ນມັດທະຍົມຕອນຕົ້ນ ຢູ່ເມືອງບາຈຽງຈະເລີນສຸກ ເຊິ່ງແບ່ງອອກເປັນ 3 ຕອນດັ່ງນີ້

ຕອນທີ່ 1 ຂໍ້ມູນສ່ວນບຸກຄົນຂອງຜູ້ຕອບແບບສຳພາດ

ຕອນທີ່ 2 ສາເຫດການປະລະການຮຽນຂອງນັກຮຽນຂອງຜູ້ຕອບແບບສຳພາດ

ຕອນທີ 3 ທັດສະນະຄະຕິ ແລະ ຂໍ້ຄິດເຫັນທີ່ມີຕໍ່ໂຮງຮຽນມັດທະຍົມຕອນຕົ້ນຢູ່ເມືອງບາຈຽງຈະເລີນສຸກ

<u>ແບບສອບຖາມ</u> ແບບສອບຖາມນັກຮຽນທີ່ປະລະການຮຽນຂອງມັດທະຍົມຕອນຕົ້ນ ຢູ່ເມືອງບາຈຽງຈະເລີນສຸກ ເຊິ່ງແບ່ງອອກເປັນ 3 ຕອນດັ່ງນີ້

ຕອນທີ່ 1 ຂໍ້ມູນສ່ວນບຸກຄົນຂອງຜູ້ຕອບແບບສອບຖາມ

ຕອນທີ 2 ຂໍ້ຄິດເຫັນກ່ຽວກັບສາເຫດການປະລະການຮຽນຂອງນັກຮຽນ

ຕອນທີ 3 ທັດສະນະຄະຕິແລະຂໍ້ຄິດເຫັນທີ່ມີຕໍ່ໂຮງຮຽນມັດທະຍົມຕອນຕົ້ນຢູ່ເມືອງບາຈຽງຈະເລີນສຸກ

**ການວິເຄາະຂໍ້ມູນ**

ສຳລັບການວິເຄາະຂໍ້ມູນ ຜູ້ສຶກສາໄດ້ລວບລວມຂໍ້ມູນຈາກແບບສອບຖາມ ແລະ ນຳຂໍ້ມູນທີ່ໄດ້ມາວິເຄາະດ້ວຍໂປຼແກຣມສຳເລັດຮູບ ໂດຍໃຊ້ວິທີທາງສະຖິຕິໃນການວິເຄາະຂໍ້ມູນ ດັ່ງຕໍ່ໄປນີ້:

ວິເຄາະຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ ໄດ້ແກ່: ເພດ, ລະດັບການສຶກສາ, ສົກປີ, ທີ່ຢູ່ອາໄສ, ສະຖານະພາບຂອງພໍ່ແມ່,ອາຊີບຂອງພໍ່ແມ່, ລາຍໄດ້ສະເລ່ຍຂອງພໍ່ແມ່.ສະຖິຕິຄ່າຄວາມຖີ່ (Frequency) ແລະ ຄ່າສ່ວນຮ້ອຍ (Percentage).

ວິເຄາະຂໍ້ມູນກ່ຽວກັບຂໍ້ຄິດເຫັນກ່ຽວກັບສາເຫດການປະລະການຮຽນຂອງນັກຮຽນສະຖິຕິຄ່າສະເລ່ຍ($\bar{x}$) ແລະ ຄ່າຜັນປ່ຽນມາດຕະຖານ ( S.D )

ການຄົ້ນຄວ້າວິໄຈໃນຄັ້ງນີ້ແມ່ນເນັ້ນໃສ່ບັນຫາທີ່ເປັນ ສາເຫດທີ່ມີຜົນຕໍ່ການປະລະການຮຽນຂອງນັກຮຽນຊັ້ນມັດທະຍົມ ຕອນຕົ້ນຢູ່ເມືອງບາຈຽງຈະເລີນສຸກ ແຂວງ ຈຳປາສັກ. ເຊິ່ງຜູ້ວິໄຈໄດ້ລວບລວມຂໍ້ມູນ, ວິເຄາະຂໍ້ມູນ ແລະ ສະເໜີຜົນການວິເຄາະຂໍ້ມູນໃນ 3 ຂັ້ນຕອນດັ່ງຕໍ່ໄປນີ້:

ຕອນທີ່ 1 ຂໍ້ມູນສ່ວນບຸກຄົນຂອງຜູ້ຕອບແບບສອບຖາມ

ຕອນທີ 2 ຂໍ້ຄິດເຫັນກ່ຽວກັບສາເຫດການປະລະການຮຽນຂອງນັກຮຽນ

ຕອນທີ 3 ທັດສະນະຄະຕິ ແລະຂໍ້ຄິດເຫັນທີ່ມີຕໍ່ໂຮງຮຽນມັດທະຍົມຕອນຕົ້ນຢູ່ເມືອງບາຈຽງຈະເລີນສຸກ

**3. ຜົນໄດ້ຮັບ ( Results )**

1. ເປັນທິດທາງໃນການກຳນົດທິດທາງການບໍລິຫານຂອງໂຮງຮຽນມັດທະຍົມຕອນຕົ້ນຢູ່ເມືອງບາຈຽງ ຈະເລີນສຸກໃຫ້ສອດຄ່ອງກັບພາວະການປ່ຽນແປງໃນອະນາຄົດ

2. ຜົນທີ່ໄດ້ຈາກການວິໄຈນີ້ສາມາດສະເໜີຕໍ່ໜ່ວຍງານທາງການສຶກສາຕ່າງໆ ທີ່ກ່ຽວຂ້ອງເພື່ອເປັນແນວທາງໃນການແກ້ໄຂບັນຫາ ແລະ ສົ່ງເສີມໃຫ້ນັກຮຽນມີໂອກາດທາງການສຶກສາຫຼາຍຂື້ນລວມທັງຈະເປັນປະໂຫຍດສຳຫຼັບການ ສຶກສາວິໄຈທີ່ກ່ຽວຂ້ອງກັບປະເດັນນີ້ໃຫ້ເລິກເຊິ່ງຍິ່ງຂຶ້ນໄປໃນອະນາຄົດ

**4 . ວິພາກຜົນ (Discussion)**

ຜົນການວິໄຈເລື່ອງການສາເຫດທີ່ມີຜົນຕໍ່ການປະລະການຮຽນຂອງນັກຮຽນຊັ້ນມັດທະຍົມຕອນຕົ້ນຢູ່ເມືອງບາຈຽງ ຈະເລີນສຸກ ແຂວງ ຈຳປາສັກ ,ຈາກດ້ານຕໍ່ຜູ້ຮຽນຕໍ່ການປະລະການຮຽນຂອງນັກຮຽນຊັ້ນມັດທະຍົມ ຕອນຕົ້ນ ຢູ່ເມືອງບາຈຽງຈະເລີນສຸກ ແຂວງ ຈຳປາສັກ ເຫັນວ່າແມ່ນມີຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕາຖານຢູ່ໃນລະດັບປານກາງ , ເມື່ອເບິ່ງເປັນລາຍຂໍ້ມີສະເລ່ຍ ແລະ ຄ່າຜັນປ່ຽນມາດຕາຖານສູງສຸດໄດ້ແກ່ ຊ່ວຍວຽກງານຄອບຄົວ ຫຼື ພໍ່ແມ່ໃຫ້ເອົານ້ອງ ຈັດແບ່ງເວລາຮຽນບໍ່ໄດ້ ໃນລະດັບຫຼາຍສຸດ ເຊິ່ງຜູ້ຮຽນເປັນສ່ວນສຳຄັນສ່ວນໜຶ່ງຂອງຂະບວນການຮຽນການສອນ ຫາກບໍ່ມີຜູ້ຮຽນ ການຮຽນການສອນກໍບໍ່ສາມາດເກີດຂຶ້ນໄດ້ໃນລະບົບການຮຽນການສອນ ນັກຮຽນຕ້ອງມີຄວາມພ້ອມທີ່ ຈະຮັບການຮຽນຮູ້ ແລະ ປະສົບການໃໝ່ທີ່ຈະເກີດຂຶ້ນ ຜູ້ຮຽນຈຳເປັນຕ້ອງມີຄວາມພ້ອມ ແລະ ມີພື້ນຖານຄວາມຮູ້ ຢ່າງພຽງພໍ ນັກຈິດວິທະຍາກຸ່ມມະນຸດນິຍົມເຊື່ອວ່າການສອບເສງຕົກ ຫຼື ບໍ່ບັນລຸຜົນການຮຽນ ເພາະພື້ນຖານຄວາມຕ້ອງການຂອງນັກຮຽນບໍ່ໄດ້ຮັບການຕອບສະໜອງ ຜູ້ຮຽນເປັນອົງປະກອບທາງການຮຽນທີ່ ສຳຄັນການສຶກສາຂໍ້ມູນຈາກຕົວຜູ້ ຮຽນ ຈຶ່ງນັບເປັນສິ່ງສຳຄັນໃນການຈັດການຮຽນການສອນໃຫ້ ມີ ປະສິດທິພາບ ການສຶກສາອົງປະກອບດ້ານຕ່າງໆ ເຊັ່ນ ດ້ານສະພາບແວດລ້ອມທາງເສດຖະກິດ ສັງຄົມການອົບຮົມເບິ່ງແຍງຈາກຄອບຄົວ ຄວາມຕ້ອງການຄວາມສົນໃຈບັນຫາຈາກຕົວຜູ້ຮຽນ ຄວາມພ້ອມ ດ້ານການຮຽນຮູ້ຄວາມສາມາດຂອງຕົວຜູ້ຮຽນ ແລະ ຄວາມແຕກຕ່າງລະຫວ່າງບຸກຄົນເປັນອົງປະກອບທີ່ສຳຄັນຂອງການວາງແຜນການຈັດການຮຽນການເຊິ່ງສອດຄ່ອງກັບທິດສະດີຂອງອາຣີ ຜະສານສິນທຸວົງ (2006). ກ່າວເຖິງການປະລະການຮຽນຂອງນັກຮຽນເກີດຈາກປັດໄຈຕ່າງໆ ດ້ານນັກສຶກສາ ຊຶ່ງສາເຫດດ້ານນັກສຶກສາ ໄດ້ແກ່ ການມີສະຕິປັນຍາທີ່ບໍ່ດີ ທັດສະນະຄະຕິທີ່ມີຕໍ່ການ ຂາດຮຽນເລື້ອຍໆ ຄວາມເບື່ອໜ່າຍຕໍ່ການຮຽນ ການມີບັນຫາສຸຂະພາບ ແລະ ບັນຫາດ້ານການປະພຶດ.

ຜົນການວິໄຈເລື່ອງ: ສາເຫດທີ່ມີຜົນຕໍ່ການປະລະການຮຽນຂອງນັກຮຽນຊັ້ນມັດທະຍົມ ຕອນ

ຕົ້ນຢູ່ເມືອງບາຈຽງ ຈະເລີນສຸກ ແຂວງ ຈຳປາສັກ, ດ້ານອາຈານສອນພົບວ່າ: ແບບສອບຖາມສາເຫດທີ່ມີຜົນຕໍ່ການປະລະການຮຽນຂອງນັກຮຽນຊັ້ນມັດທະຍົມ ຕອນຕົ້ນຢູ່ເມືອງບາຈຽງ ຈະເລີນສຸກ ແຂວງ ຈຳປາສັກໃນດ້ານ ອາຈານຜູ້ສອນ ແມ່ນມີຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕາຖານຢູ່ໃນລະດັບໜ້ອຍສຸດ ເຊິ່ງມີ $(\overline{X} = 2.44)$ ແລະ $(SD = 0,64)$ ເມື່ອພິຈາລະນາແຕ່ລະຂໍ້, ຂໍ້ທີ່ມີສະເລ່ຍ ແລະ ຄ່າຜັນປ່ຽນມາດຕາຖານສູງສຸດໄດ້ແກ່ ຜູ້ສອນມີວິທີການສອນທີ່ບໍ່ໜ້າສົນໃຈເກີດຄວາມເບື່ອໜ່າຍ ບໍ່ຢາກຮຽນ ໃນລະດັບປານກາງ ເຊິ່ງມີຄ່າສະເລ່ຍ $(\overline{X} = 3.46)$ ; $(SD = 0.87)$ ທັງນີ້ ອາຈານຜູ້ສອນ ຫຼື ຄູເປັນອົງປະກອບທີ່ມີຄວາມສຳຄັນຍິ່ງທີ່ຈະເຮັດໃຫ້ການຮຽນການສອນ ເປັນໄປຢ່າງມີປະສິດທິພາບການກະກຽມການສອນຂອງຄູຈຶ່ງມີຄວາມສຳຄັນຍິ່ງອາດສະຫຼຸບປະໂຫຍດຂອງ ການກະກຽມການສອນໄດ້ດັ່ງນີ້ການກະກຽມການສອນທີ່ດີຈະກໍ່ໃຫ້ເກີດຄວາມໝັ້ນໃຈໃນການສອນຖ້າຫາກອາຈານຜູ້ສອນໄດ້ມີການກະກຽມການສອນຕ່າງ ໆ ໄດ້ຢ່າງເໝາະສົມທັງດ້ານເນື້ອໃນວິທີການສອນຕະຫຼອດຈົນບຸກຄະລິກກະພາບ ຂອງອາຈານຜູ້ສອນສະນັ້ນຈຶ່ງເປັນການສ້າງຄວາມຄວາມໝັ້ນໃຈໃນການສອນໃຫ້ເກີດຂຶ້ນເຊິ່ງສອດຄ່ອງກັບທິດສະດີຂອງອະເນກ ກຸນກຣີ ແສງ (1979: 21). ກ່າວວ່າລັກສະນະ ແລະ ພັດທະນາການຂອງນັກຮຽນ ນັກສຶກສາ ຄູຈະຕ້ອງເຂົ້າໃຈເປັນຢ່າງດີທັງໃນດ້ານພື້ນຖານຄວາມຮູ້ຄວາມສາມາດທົ່ວໄປຂໍ້ບົກຜ່ອງສ່ວນຕົວ ຄວາມສາມາດສະເພາະຕົນເພາະສິ່ງເຫຼົ່ານີ້ມີອິດທິພົນຕໍ່ຄວາມພ້ອມໃນການຮຽນ ແລະ ວິທີການຮຽນຮູ້ ຂອງນັກຮຽນ ນັກສຶກສາເປັນຢ່າງຫຼາຍຄວາມຮູ້ ແລະ ຄວາມເຂົ້າໃຈກຽວກັບນັກຮຽນ ນັກສຶກສາຈະຊ່ວຍໃຫ້ຄູ ສາມາດແກ້ບັນຫາທີ່ເກີດຂຶ້ນກ່ອນການສອນໄດ້ຢ່າງເໝາະສົມທັງໃນດ້ານການເລືອກຄວາມຈຸດໝາຍ ແລະ ຂະບວນການສອນນັກຮຽນ ນັກສຶກສາຈະມີຄວາມແຕກຕ່າງກັນຫຼາຍດ້ານທັງເພດ ໄວ ສະຕິປັນຍາພື້ນຖານຄວາມຮູ້ ພື້ນຖານທາງຄອບຄົວຖານະທາງເສດຖະກິດສັງຄົມສິ່ງເຫຼົ່ານີ້ມີອິດທິພົນຕໍ່ຜົນການຮຽນຮູ້ຂອງນັກຮຽນ ນັກສຶກສາຢ່າງຫຼາຍຜູ້ສອນຈະຕ້ອງສາມາດພິຈາລະນາໄດ້ວ່ານັກຮຽນ ນັກສຶກສາມີຄວາມແຕກຕ່າງດ້ານໃດແດ່,ອີກທິດສະດີໜຶ່ງໄດ້ກ່າວໄວ້ວ່າສຸຣະພັນ ຕັນສຣີວົງ (1995: 11-12). ກ່າວວ່າການກະກຽມການສອນທີ່ດີເຮັດໃຫ້ການສອນ ລາບລື້ນຖືກຕ້ອງ ແລະ ບໍ່ສັບສົນເຖິງວ່າການສອນຈະເປັນເລື່ອງທີ່ຫຍຸ້ງຍາກສັບສົນ ແລະ ມີຕົວແປຕ່າງ ໆ ຫຼາຍກໍ່ຕາມແຕ່ຖ້າຫາກມີການກະກຽມການສອນໃຫ້ເປັນລະບົບກໍຈະຫຼຸດຄວາມສັບສົນລົງໄດ້ ນຳໄປສູ່ຈຸດໝາຍ ປາຍທາງໄດ້ກົງຕາມເວລາທີ່ກຳນົດໄວ້ ແລະ ຈະຊ່ວຍໃຫ້ມີການວາງແຜນໃຫ້ນັກສຶກສາເຂົ້າຮ່ວມກິດຈະກຳ ນັກສຶກສາມີຄວາມສົນໃຈຊື່ນຊົມຍິນດີມີຄວາມເຊື່ອໝັ້ນ ແລະສັດທາໃນຕົວຄູຫຼາຍຂຶ້ນຊຶ່ງຈະເຮັດໃຫ້ການຮຽນ ການສອນປະສົບຜົນສຳເລັດຕາມເປົ້າໝາຍແລະ ວັດຖຸປະສົງຂອງການຮຽນການສອນ.

ຜົນການວິໄຈເລື່ອງ: ສາເຫດທີ່ມີຜົນຕໍ່ການປະລະການຮຽນຂອງນັກຮຽນຊັ້ນມັດທະຍົມ ຕອນຕົ້ນຢູ່ເມືອງບາຈຽງ ຈະເລີນສຸກ ແຂວງ ຈຳປາສັກ, ຈາກດ້ານຄົວຄອບ ພົບວ່າ: ແບບສອບຖາມປັດໃຈທີ່ມຜົນຕໍ່ການປະລະການຮຽນຂອງນັກຮຽນຊັ້ນມັດທະຍົມ ຕອນຕົ້ນຢູ່ເມືອງບາຈຽງ ຈະເລີນສຸກ ແຂວງ ຈຳປາສັກໃນດ້ານສະພາບຄອບຄົວ ແມ່ນມີຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕາຖານຢູ່ໃນລະດັບໜ້ອຍສຸດ ເຊິ່ງມີ $(\overline{X} = 2.29)$ ແລະ $(SD = 0,58)$ ເມື່ອພິຈາລະນາແຕ່ລະຂໍ້, ຂໍ້ທີ່ມີສະເລ່ຍ ແລະ ຄ່າຜັນປ່ຽນມາດຕາຖານສູງສຸດໄດ້ແກ່ ບັນຫາເລື່ອງເສດຖະກິດໃນລະດັບຫຼາຍສຸດ ເຊິ່ງມີຄ່າສະເລ່ຍ $(\overline{X} = 4.87)$ ; $(SD = 0.34)$ ທັງນີ້ຄອບຄົວແມ່ນຫົວໜ່ວຍ ຫຼື ເປັນສະຖາບັນພື້ນຖານຂອງສັງຄົມທີ່ປະກອບດ້ວຍ ພໍ່ ແມ່ ແລະລູກ ຄອບຄົວເປັນສະຖາບັນທີ່ສະມາຊິກໃນຄອບຄົວມີຄວາມ

ສຳພັນກັນຢ່າງໃກ້ຊິດສະໜິດແໜ້ນ ເປັນອັນໜຶ່ງອັນດຽວພຶດຕິກຳ ສ່ວນບຸກຄົນ ຄ່ານິຍົມ ທັດສະນະຄະຕິຈາກບຸກຄົນໃນຄອບຄົວເປັນສະຖາບັນສັງຄົມທີ່ນ້ອຍທີ່ສຸດແຕ່ມີຄວາມສຳຄັນທີ່ສຸດ ເພາະເປັນຫົວໜ່ວຍສັງຄົມທຳອິດທີ່ຫຼໍ່ຫຼອມພຶດຕິກຳ ການກະທຳ, ຄວາມຄິດ ຄວາມຮູ້ສຶກ ຂອງຄົນ ໃນຄອບຄົວ ເອີ້ນໂດຍລວມວ່າ ຊ່ວຍຫຼໍ່ຫຼອມບຸກຄະລິກກະພາບຂອງມະນຸດເພື່ອກຽມຄວາມພ້ອມທີ່ຈະເປັນມະນຸດທີ່ສົມບູນໃນອະນາຄົດ ຄອບຄົວທີ່ສົມບູນຈະອາໄສຢູ່ຮ່ວມກັນມີຄວາມສຳພັນກັນ ພໍ່ແມ່ ຈະຄອຍຖ້າເບິ່ງແຍງ ອົບຮົມສັ່ງສອນແນະນຳ ແລະ ໃຫ້ຄວາມຊ່ວຍເຫຼືອສະໜັບສະໜູນໃຫ້ການສຶກສາຕາມຖານະ ແລະ ເສດຖະກິດເດັກທີ່ມາຈາກຄອບຄົວທີ່ສົມບູນຈະບໍ່ຄ່ອຍມີບັນຫາສ່ວນຄອບຄົວທີ່ພໍ່ແມ່ແຍກກັນຢູ່ ຢ່າຮ້າງ ຫຼື ເສຍຊີວິດ ໂດຍພໍ່ມີພັນລະຍາໃໝ່ ຫຼື ແມ່ມີຜົວໃໝ່ ລູກຈະອາໄສຢູ່ກັບຍາດຕິພີ່ນ້ອງ ບາງຄອບຄົວ ພໍ່ແມ່ຕ້ອງໜີໄປຫາລາຍໄດ້ຖິ່ນອື່ນ ຈຳເປັນຕ້ອງຈ້າງຜູ້ອື່ນລ້ຽງລູກ ໃຫ້ຍາດຕິພີ່ນ້ອງເບິ່ງແຍງ ຫຼື ອາດຕ້ອງຝາກເຂົ້າໂຮງຮຽນກ່ອນໄວຮຽນ ເຊິ່ງຈະເຮັດໃຫ້ຄວາມໃກ້ຊິດຄວາມຜູກພັນ ຄວາມເອົາໃຈໃສ່ ຊຶ່ງກັນ ແລະ ກັນພາຍໃນຄອບຄົວຫຼຸດລົງ ສິ່ງແວດລ້ອມພາຍນອກຈະເຂົ້າມາມີອິດທິພົນ ເຊັ່ນ ກຸ່ມເພື່ອນຈະມີຄວາມສຳຄັນຫຼາຍກວ່າຄອບຄົວ ຖ້າໄດ້ເຂົ້າກຸ່ມກັບເພື່ອນທີ່ບໍ່ດີບັນຫາອື່ນໆ ອາດຕາມມາ ອີກບັນຫາໜຶ່ງ ເກີດຈາກຄອບຄົວມີຖານະບໍ່ດີມີລາຍໄດ້ນ້ອຍ ຫຼື ປະສົບໄພທຳມະຊາດກໍຈະສົ່ງຜົນເຖິງຕົວເດັກອີກເຊິ່ງສອດຄ່ອງກັບທິດສະດີຂອງ ແທນຄຸນ ຈິດອິດສະຫຼະ **(2008).** ໄດ້ ອະທິບາຍໄວ້ ວ່າ ຄອບຄົວ ມີຄວາມສຳຄັນຫລາຍຕໍ່ການພັດທະນາເດັກ ແລະ ເຍົາວະຊົນຫຼາຍທີ່ສຸດ ບຸກຄົນໃນຄອບຄົວຕ້ອງມີຄວາມຮັກ ຄວາມເຂົ້າໃຈຕໍ່ກັນ ພຶດຕິກຳການເອົາໃຈໃສ່ ຄວາມຮັບຜິດຊອບ ການເຫັນຄຸນຄ່າ ແລະ ການເຄົາລົບນັບຖື ເປັນສ່ວນປະກອບທີ່ສຳຄັນ ແລະ ການທີ່ພໍ່ແມ່ບໍ່ຄ່ອຍມີເວລາໃຫ້ກັບລູກຈະເຮັດໃຫ້ລູກບໍ່ສະໜິດສະໜົມກັນເທົ່າທີ່ຄວນ ຄວາມຫ່າງເຫີນກັນເຮັດໃຫ້ລູກຮູ້ສຶກແຕກແຍກ ແລະ ເອົາແຕ່ໃຈຕົນເອງ ຈົນກາຍເປັນພຶດຕິກຳ ທີ່ບໍ່ເໝາະສົມ ເຊັ່ນ ບໍ່ຢາກຮໍ່າຮຽນ ຜິດຂ້ອງຕ້ອງຖຽງ ແລະ ຕ້ອງຍ້າຍບ່ອນຮຽນ ໃນທີ່ສຸດ ປັດໄຈທີ່ສຳຄັນອີກປະການໜຶ່ງທີ່ສົ່ງຜົນຕໍ່ການປະລະການຮຽນຂອງນັກຮຽນຄື ການເຫັນຄວາມສຳຄັນຂອງການສຶກສາຂອງພໍ່ແມ່.

ຜົນຈາກດ້ານສະພາບແວດລ້ອມພົບວ່າ: ແບບສອບຖາມສາເຫດທີ່ມີຜົນຕໍ່ການປະລະການຮຽນຂອງນັກຮຽນຊັ້ນມັດທະຍົມ ຕອນຕົ້ນຢູ່ເມືອງບາຈຽງ ຈະເລີນສຸກ ແຂວງ ຈຳປາສັກໃນ ດ້ານສະພາບແວດລ້ອມໃນສະຖານທີ່ການສຶກສາ ແມ່ນມີຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕາຖານຢູ່ໃນລະດັບປານກາງ ເຊິ່ງມີ $(\overline{X}=3.29)$ ແລະ $(SD=0{,}56)$ ເມື່ອພິຈາລະນາແຕ່ລະຂໍ້, ຂໍ້ທີ່ມີສະເລ່ຍ ແລະ ຄ່າຜັນປ່ຽນມາດຕາຖານສູງສຸດໄດ້ແກ່ສະຖານການສຶກສາມີທຶນການສຶກສາໜ້ອຍເກີນໄປໃນລະດັບຫຼາຍສຸດ ເຊິ່ງມີຄ່າສະເລ່ຍ $(\overline{X}=4.87)$ ; $(SD=0.44)$ ສະພາບແວດລ້ອມຂອງສະຖານບັນການສຶກສາ ເປັນອົງປະກອບດ້ານການຮຽນ ການສອນທີ່ປະກອບດ້ວຍປັດໄຈຕ່າງໆ ຫຼາຍປະການ ໄດ້ແກ່ ອາຄານສະຖານທີ່ ຫຼັກສູດ ຜູ້ສອນ ຂະບວນການຮຽນການສອນ ການບໍລິຫານ ແລະ ການບໍລິການທີ່ສະໜັບສະໜູນການຮຽນການສອນ ອຸປະກອນ ການຮຽນການສອນ ສິ່ງອຳນວຍຄວາມສະດວກຕ່າງໆ ເຊັ່ນ ຕ້ອງມີທີ່ພັກຜ່ອນຢ່າງພຽງພໍ ມີຫ້ອງສະໝຸດ ມີການສະໜັບສະໜູນທຶນການສຶກສາ ມີກິດຈະກຳທີ່ຫຼາກຫຼາຍທີ່ຕອບສະໜອງກັບຄວາມຕ້ອງການຂອງນັກຮຽນ-ນັກສຶກສາ ທັງໝົດ ແລະ ລວມເຖິງການເບິ່ງແຍງເອົາໃຈໃສ່ຈາກຄູອາຈານ ສິ່ງຕ່າງໆເຫຼົ່ານີ້ເປັນສ່ວນສະໜັບສະໜູນໃຫ້ການຮຽນການສອນ ມີປະສິດທິພາບຫຼາຍຍິ່ງຂຶ້ນເພາະສະນັ້ນ, ອາດເປັນສາເຫດການປະລະການຮຽນຂອງນັກຮຽນໄດ້, ເຊິ່ງສອດຄ່ອງກັບທິດສະດີ ສິຣິວັນນະ ເກສົມສາສຕກິດາ

ການ (ອ້າງເຖິງໃນ ສຸພາພອນ ພິມພະນິດ, 2012 : 34 - 37). ກ່າວວ່າສາເຫດຂອງການປະລະການຮຽນຂອງຜູ້ຮຽນ ອາດເກີດຈາກສາເຫດດັ່ງຕໍ່ໄປນີ້

1.) ສະຖານທີ່ຮຽນ ກັບທີ່ຢູ່ອາໄສໄກເກີນໄປ ຕ້ອງໃຊ້ເວລາໃນ ການເດີນທາງ, ບາງແຫ່ງຢູ່ໄກກັນ ເກີນໄປ ປະກອບກັບຜູ້ສອນ ສອນເກີນເວລາ ເຮັດໃຫ້ເຂົ້າຫ້ອງຮຽນສວາຍ ຟັງຜູ້ສອນບໍ່ຮູ້ເລື່ອງອາດບໍ່ມີຄວາມສົນໃຈ ດ້ວຍການລົມກັນເອງ ຫຼື ອາດນອນຫຼັບ ຊຶ່ງເປັນຜົນເສຍຕໍ່ເນື່ອງກັນໄປ.

2.) ສະພາບຫ້ອງຮຽນ ຕ້ອງມີສະພາບທີ່ສະຫວາດສະເຫວີຍ, ບໍ່ແອອັດ. ຖ້າວ່າມີທີ່ນັ່ງບໍ່ສົມດຸນກັບຈຳນວນຜູ້ຮຽນ ເຮັດໃຫ້ເກີດຄວາມອຶດອັດ ອາກາດຮ້ອນອົບເອົ້າ ຫຼື ຢູ່ໄກຫ້ອງສຸຂາ ຫຼື ຢູ່ບໍລິເວນທີ່ມີຄົນຍ່າງຜ່ານໄປມາ ຕະຫຼອດເວລາ ເຮັດໃຫ້ຜູ້ຮຽນບໍ່ມີສະມາທິໃນການຮຽນ ນອກຈາກສະພາບແວດລ້ອມໃນຫ້ອງຮຽນແລ້ວ ສະພາບແວດລ້ອມນອກສະຖານທີ່ການສຶກສາກໍມີສ່ວນສຳຄັນຕໍ່ການຈັດການຮຽນການສອນເຊັ່ນກັນ ຫາກສະພາບແວດລ້ອມນອກສະຖານສຶກສາເປັນແຫຼ່ງທ່ອງທ່ຽວ ຫຼື ສະຖານບັນເທີງ ຫຼື ເປັນແຫຼ່ງອະບາຍຍະມຸກ ນັກຮຽນອາດຢາກຮູ້ ຢາກເຫັນ ຫຼື ໄປທົດລອງສຳຜັດ ເຮັດໃຫ້ເສຍການຮຽນໄດ້ ຫຼື ມີຜົນກະທົບຕໍ່ການຮຽນການສອນໄດ້.

ດ້ານສັງຄົມພົບວ່າ: ແບບສອບຖາມສາເຫດທີ່ມີຜົນຕໍ່ການປະລະການຮຽນຂອງນັກຮຽນຊັ້ນມັດທະຍົມ ຕອນຕົ້ນຢູ່ເມືອງບາຈຽງ ຈະເລີນສຸກ ແຂວງ ຈຳປາສັກໃນ ດ້ານສັງຄົມໃນສະຖານທີ່ການສຶກສາ ແມ່ນມີຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕາຖານຢູ່ໃນລະດັບໜ້ອຍສຸດ ເຊິ່ງມີ $(\overline{X} = 2.05)$ ແລະ $(SD = 0{,}55)$ ເມື່ອພິຈາລະນາແຕ່ລະຂໍ້, ຂໍ້ທີ່ມີສະເລ່ຍ ແລະ ຄ່າຜັນປ່ຽນມາດຕາຖານສູງສຸດໄດ້ແກ່ ການຄົມມະນາຄົມ ຫຼື ການເດີນທາງມາຮຽນບໍ່ສະດວກ ແມ່ນຢູ່ໃນລະດັບຫຼາຍ ເຊິ່ງມີຄ່າສະເລ່ຍ $(\overline{X} = 3.82)$ ; $(SD = 0.50)$ ເນື່ອງຈາກນັກສຶກສາຢູ່ໃນຊ່ວງຂອງໄວລຸ້ນຊຶ່ງເປັນຊ່ວງຂອງການປ່ຽນແປງແບບແຜນຂອງປະຕິສຳພັນທີ່ເດັກໄວລຸ້ນຈະມີຕໍ່ບຸກຄົນອ້ອມ ໆ ຕົວໄລຍະໄວລຸ້ນເປັນໄວທີ່ຕ້ອງເພິ່ງພາຄອບຄົວພໍ່ແມ່ ຫລື ຜູ້ໃຫຍ່ອື່ນ ໆ ຈະຄ່ອຍ ໆ ປ່ຽນໄປ ໄວລຸ້ນຈະຮູ້ສຶກຢາກເປັນອິດສະຫຼະຈາກການເບິ່ງແຍງຢ່າງໃກ້ຊິດຕ້ອງການເຮັດສິ່ງຕ່າງ ໆ ດ້ວຍຕົນເອງຕາມຄວາມຄິດທີ່ເຫັນວ່າເໝາະສົມສາມາດຄວບຄຸມຕົນເອງ ຄືມີວິໄນໃນຕົນເອງຫຼາຍຂຶ້ນເປັນ ລຳດັບແລະຍັງມີຄວາມຕ້ອງການການຍອມຮັບຈາກສັງຄົມ ຜູກພັນກັບເພື່ອນ ຮຽນຮູ້ທີ່ຈະພັດທະນາຄວາມສຳພັນກັບ ກຸ່ມເພື່ອນທັງຊາຍແລະຊາວ ມີທັກສະທາງສັງຄົມຫລາຍຂຶ້ນ ມີຄວາມສົນໃຈເພດກົງກັນຂ້າມ ແລະລະມັດລະວັງຕົນເອງ ຕໍ່ຄວາມຮູ້ສຶກຫລືທ່າທີຂອງຜູ້ອື່ນ ຕ້ອງການສະຖານະພາບທາງສັງຄົມແລະການມີບົດບາດທາງສັງຄົມຫຼາຍຂຶ້ນ ມີ ຄວາມຜູກພັນທາງຈິດໃຈແລະສາຍສຳພັນກັບຜູ້ອື່ນທີ່ຍາວນານແລະໝັ້ນຄົງຂຶ້ນຕາມລຳດັບ ມີແນວທາງປະຕິບັດ ຕົນເອງ ຮຽນຮູ້ຄ່ານິຍົມຂອງສັງຄົມ ແລະຊຶມຊັບສິ່ງຕ່າງໆ ໃນສັງຄົມອ້ອມຂ້າງຕ້ອງການໃຫ້ສິ່ງຕ່າງໆ ໃນສັງຄົມດຳເນີນໄປຕາມເຫດຜົນແລະຄວາມຖືກຕ້ອງ ຕາມອຸດົມຄະຕິແລະຄ່ານິຍົມຂອງຕົນ ມັກຈະມີຄວາມຮູ້ສຶກຂັດແຍ້ງໄດ້ງ່າຍເມື່ອຕ້ອງພະເຊີນກັບຄວາມສັບສົນປວນແປຂອງສັງຄົມແລະວັດທະນະທຳ ໄວລຸ້ນຈະຄ່ອຍໆ ຮຽນຮູ້ສັງຄົມເບິ່ງເຫັນ ຄວາມສຳພັນລະຫວ່າງຕົນເອງກັບສັງຄົມ ໃນລັກສະນະທີ່ຕົນເປັນສະມາຊິກຂອງສັງຄົມແລະມີສ່ວນຮ່ວມຮັບຜິດຊອບໃນ ໜ້າທີ່ແລະມີສິດທິທາງສັງຄົມເຊັ່ນດຽວກັບຜູ້ໃຫຍ່ຊຶ່ງໄວຍລຸ້ນມັກຈະມີບັນຫາ ເຊິ່ງສອດຄ່ອງກັບງານວິໄຈຂອງ ສົນໄຊ ກິຕິຍານັນ (2010). ໄດ້ສຶກສາປັດໄຈທີ່ມີອິດທິພົນຕໍ່ການປະລະການຮຽນຂອງນັກສຶກສາຄະນະວິທະຍາ

ການຈັດການ ມະຫາວິທະຍາໄລຣາດຊະພັດການະຈັນບຸຣີ ໂດຍມີວັດຖຸປະສົງເພື່ອສຶກສາປັດໄຈທີ່ມີອິດທິພົນຕໍ່ການປະລະການຮຽນຂອງນັກສຶກສາຄະນະວິທະຍາການຈັດການ ມະຫາວິທະຍາໄລລາດຊະພັດການະຈັນບຸຣີປະຈຳປີການສຶກສາ 2008-2010 ຜົນການວິໄຈພົບວ່າ ປັດໄຈສ່ວນຕົວຂອງນັກສຶກສາເລື່ອງ ຜົນການຮຽນບໍ່ດີເປັນປັດໄຈສູງສຸດຮອງລົງມາ ໄດ້ແກ່ ປັດໄຈດ້ານຄອບຄົວ ປັດໄຈດ້ານອາຈານ ປັດໄຈດ້ານການຈັດການຮຽນການສອນ ປັດໄຈດ້ານສັງຄົມ ປັດໄຈດ້ານການບໍລິການ ແລະ ການສະໜັບສະໜູນທີ່ອຳນວຍຕໍ່ການຮຽນການສອນປັດໄຈດ້ານອາຈານທີ່ປຶກສາ ຕາມລຳດັບ.

**5 . ສະຫຼຸບຜົນ (Conclusion)**

ການວິເຄາະຂໍ້ມູນໃນການສະເໜີ ສາເຫດທີ່ມີຜົນຕໍ່ການປະລະການຮຽນຂອງນັກຮຽນຊັ້ນມັດທະຍົມ ຕອນຕົ້ນຢູ່ເມືອງບາຈຽງ ຈະເລີນສຸກ ແຂວງ ຈຳປາສັກ.

ກຸ່ມຕົວຢ່າງທີ່ນຳໃຊ້ການວິໄຈຄັ້ງນີ້ໄດ້ແກ່: ນັກຮຽນທີ່ປະລະການຮຽນຊັ້ນມັດທະຍົມຕອນຕົ້ນຢູ່ເມືອງບາຈຽງຈະເລີນສຸກ ຈຳນວນ 73 ຄົນ.

1.ແບບສອບຖາມຄວາມຄິດເຫັນຂອງນັກຮຽນທີ່ປະລະການຮຽນ

2.ແບບສຳພາດສຳລັບຄູສອນ

3.ແບບສຳພາດສຳລັບຜູ້ບໍລິຫານໂຮງຮຽນ

ສະຖິຕິທີ່ໃຊ້ໃນການເກັບກຳຂໍ້ມູນແມ່ນປະກອບມີ:ເປີເຊັນ $(P)$, ຄ່າສະເລ່ຍ $\overline{X}$ ແລະຄ່າຜັນປ່ຽນມາດຕະຖານ $SD$

ຈາກການວິເຄາະຂໍ້ມູນສາເຫດທີ່ມີຜົນຕໍ່ການປະລະການຮຽນຂອງນັກຮຽນຊັ້ນມັດທະຍົມ ຕອນຕົ້ນຢູ່ເມືອງບາຈຽງ ຈະເລີນສຸກ ແຂວງ ຈຳປາສັກ ຜູ້ວິໄຈສາມາດສະຫຼຸບໄດ້ດັ່ງນີ້:

ຜົນການນຳໃຊ້ແບບທົດສອບຖາມສຳລັບນັກຮຽນທີ່ປະລະການຮຽນສາມາດສະຫຼຸບໄດ້ດັ່ງນີ້:

**ຈາກຂໍ້ມູນສ່ວນຕົວ**ເຫັນວ່າ: ຜູ້ຕອບແບບສອບຖາມເລື່ອງ: ສາເຫດທີ່ມີຜົນຕໍ່ການປະລະການຮຽນຂອງນັກຮຽນຊັ້ນມັດທະຍົມ ຕອນຕົ້ນຢູ່ເມືອງບາຈຽງ ຈະເລີນສຸກ ແຂວງ ຈຳປາສັກ ຂອງນັກຮຽນເຫັນວ່າເປີເຊັນນັກຮຽນເພດຊາຍປະລະຫຼາຍກວ່ານັກຮຽນຍິງໃນເປີເຊັນ $P = 59.62\%$ ແລະ $p = 40.38\%$ , ນັກຮຽນຊັ້ນທີ່ປະລະການຮຽນຫຼາຍແມ່ນນັກຮຽນຊັ້ນມັດທະຍົມປີທີ 2 ກວມເປີເຊັນ $P = 55.77\%$ ຖັດລົງມາແມ່ນຊັ້ນມັດທະຍົມປີທີ 3 ກວມເປີເຊັນ $P = 28.85\%$ ຊັ້ນທີ່ປະລະການຮຽນໜ້ອຍກວ່າແມນຊັ້ນມັດທະຍົມປີທີ 4 ກວມເປີເຊັນ$P = 7.69\%$ ສ່ວນໃຫຍ່ສະຖານະພາບຂອງພໍ່ແມ່ແມ່ນຢູ່ນຳກັນ, ອາຊີບຫຼັກແມ່ນເຮັດສ່ວນລາຍໄດ້ປີຫຼາຍກວ່າ 15 ລ້ານກີບຕໍ່ປີ.

**ຈາກຄວາມຄິດເຫັນແຕ່ລະດ້ານ**ເຫັນວ່າ: ແບບສອບຖາມສາເຫດທີ່ມີຜົນຕໍ່ການປະລະການຮຽນຂອງນັກຮຽນຊັ້ນມັດທະຍົມ ຕອນຕົ້ນຢູ່ເມືອງບາຈຽງ ຈະເລີນສຸກ ແຂວງ ຈຳປາສັກແມ່ນມີຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕາຖານຢູ່ໃນລະດັບໜ້ອຍເທົ່າກັບ $(\overline{X} = 2.67)$ ແລະ $(SD = 0,59)$ ເມື່ອພິຈາລະນາແຕ່ລະດ້ານ, ດ້ານທີ່ມີຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕາຖານສູງສຸດໄດ້ແກ່ ດ້ານຜູ້ຮຽນ ແລະ ດ້ານສະພາບແວດລ້ອມໃນສະຖານທີ່ສຶກສາ ໃນລະດັບປານກາງ ເຊິ່ງມີຄ່າສະເລ່ຍ $(\overline{X} = 3.29)$ ; $(SD = 0,60)$ ແລະ ຂໍ້ທີ່ມີຄ່າສະເລ່ຍຕ່ຳກວ່າໝູ່ແມ່ນ ດ້ານ ສັງຄົມໄດ້ຢູ່ໃນລະດັບໜ້ອຍເຊິ່ງມີ $(\overline{X} = 2.06)$ ແລະ $(SD = 0.55)$

**ດ້ານຜູ້ຮຽນ**ເຫັນວ່າ: ແບບສອບຖາມສາເຫດທີ່ມີຜົນຕໍ່ການປະລະການຮຽນຂອງນັກຮຽນຊັ້ນມັດທະຍົມ ຕອນຕົ້ນຢູ່ເມືອງບາຈຽງ ຈະເລີນສຸກ ແຂວງ ຈຳປາສັກໃນດ້ານ ຜູ້ຮຽນ ແມ່ນມີຄ່າສະເລ່ຍ ແລະ ຄ່າຜັນ

ປຽນມາດຕາຖານຢູ່ໃນລະດັບປານກາງ ເຊິ່ງມີ ($\overline{X} = 3.29$) ແລະ ($SD = 0{,}59$) ເມື່ອພິຈາລະນາແຕ່ລະຂໍ້, ຂໍ້ທີ່ມີສະເລ່ຍ ແລະ ຄ່າຜັນປ່ຽນມາດຕາຖານສູງສຸດໄດ້ແກ່ ຊ່ວຍວຽກງານຄອບຄົວ ຫຼື ພໍ່ແມ່ໃຫ້ເອົານ້ອງ ຈັດແບ່ງເວລາຮຽນບໍ່ໄດ້ ໃນລະດັບຫຼາຍສຸດ ເຊິ່ງມີຄ່າສະເລ່ຍ ($\overline{X} = 5.00$) ; ($SD = 0.00$) ແລະ ຂໍ້ທີ່ມີຄ່າສະເລ່ຍຕ່ຳກວ່າໝູ່ແມ່ນ ມີໂລກປະຈຳຕົວ ໄດ້ຢູ່ໃນລະດັບໜ້ອຍສຸດເຊິ່ງມີ ($\overline{X} = 1.08$) ແລະ ($SD = 0.33$)

**ດ້ານອາຈານຜູ້ສອນ**ເຫັນວ່າ: ແບບສອບຖາມສາເຫດທີ່ມີຜົນຕໍ່ການປະລະການຮຽນຂອງນັກຮຽນຊັ້ນມັດທະຍົມ ຕອນຕົ້ນຢູ່ເມືອງບາຈຽງ ຈະເລີນສຸກ ແຂວງ ຈຳປາສັກໃນດ້ານ ອາຈານຜູ້ສອນ ແມ່ນມີຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕາຖານຢູ່ໃນລະດັບໜ້ອຍສຸດ ເຊິ່ງມີ ($\overline{X} = 2.44$) ແລະ ($SD = 0{,}64$) ເມື່ອພິຈາລະນາແຕ່ລະຂໍ້, ຂໍ້ທີ່ມີສະເລ່ຍ ແລະ ຄ່າຜັນປ່ຽນມາດຕາຖານສູງສຸດໄດ້ແກ່ ຜູ້ສອນມີວິທີການສອນທີ່ບໍ່ໜ້າສົນໃຈເກີດຄວາມເບື່ອໜ່າຍ ບໍ່ຢາກຮຽນ ໃນລະດັບປານກາງ ເຊິ່ງມີຄ່າສະເລ່ຍ ($\overline{X} = 3.46$) ; ($SD = 0.87$) ແລະ ຂໍ້ທີ່ມີຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕາຕ່ຳກວ່າໝູ່ຄື ຜູ້ສອນຂາດການຄວບຄຸມອາລົມ ແລະ ການປະພຶດຕົນບໍ່ເໝາະສົມຢູ່ໃນລະດັບໜ້ອຍ ($\overline{X} = 1.54$) ແລະ ($SD = 0.64$)

**ດ້ານສະພາບຄອບຄົວ** ເຫັນວ່າ: ແບບສອບຖາມສາເຫດທີ່ມີຜົນຕໍ່ການປະລະການຮຽນຂອງນັກຮຽນຊັ້ນມັດທະຍົມ ຕອນຕົ້ນຢູ່ເມືອງບາຈຽງ ຈະເລີນສຸກ ແຂວງ ຈຳປາສັກໃນດ້ານສະພາບຄອບຄົວ ແມ່ນມີຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕາຖານຢູ່ໃນລະດັບໜ້ອຍ ເຊິ່ງມີ ($\overline{X} = 2.29$) ແລະ ($SD = 0{,}58$) ເມື່ອພິຈາລະນາແຕ່ລະຂໍ້, ຂໍ້ທີ່ມີສະເລ່ຍ ແລະ ຄ່າຜັນປ່ຽນມາດຕາຖານສູງສຸດໄດ້ແກ່ ບັນຫາເລື້ອງເສດຖະກິດໃນລະດັບຫຼາຍສຸດ ເຊິ່ງມີຄ່າສະເລ່ຍ ($\overline{X} = 4.87$) ; ($SD = 0.34$) ແລະ ຂໍ້ທີ່ມີຄ່າສະເລ່ຍຕ່ຳກວ່າໝູ່ແມ່ນ ເສຍສະຫຼະໃຫ້ອ້າຍຫຼືນ້ອງໄດ້ຮຽນຢູ່ໃນລະດັບໜ້ອຍສຸດເຊິ່ງມີ ($\overline{X} = 1.06$) ແລະ ($SD = 0.42$)

**ດ້ານສະພາບແວດລ້ອມ**ເຫັນວ່າ: ແບບສອບຖາມສາເຫດທີ່ມີຜົນຕໍ່ການປະລະການຮຽນຂອງນັກຮຽນຊັ້ນມັດທະຍົມ ຕອນຕົ້ນຢູ່ເມືອງບາຈຽງ ຈະເລີນສຸກ ແຂວງ ຈຳປາສັກໃນ ດ້ານສະພາບແວດລ້ອມໃນສະຖານທີ່ການສຶກສາ ແມ່ນມີຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕາຖານຢູ່ໃນລະດັບປານກາງ ເຊິ່ງມີ ($\overline{X} = 3.29$) ແລະ ($SD = 0{,}56$) ເມື່ອພິຈາລະນາແຕ່ລະຂໍ້, ຂໍ້ທີ່ມີສະເລ່ຍ ແລະ ຄ່າຜັນປ່ຽນມາດຕາຖານສູງສຸດໄດ້ແກ່ ສະຖານການສຶກສາມີທຶນການສຶກສາໜ້ອຍເກີນໄປໃນລະດັບຫຼາຍສຸດ ເຊິ່ງມີຄ່າສະເລ່ຍ ($\overline{X} = 4.87$) ; ($SD = 0.44$) ແລະຂໍ້ທີ່ມີຄ່າສະເລ່ຍຕ່ຳກວ່າໝູ່ແມ່ນ ຫ້ອງນ້ຳມີບໍ່ພໍ ຢູ່ໃນລະດັບໜ້ອຍສຸດເຊິ່ງມີ ($\overline{X} = 1.25$) ແລະ ($SD = 0.56$)

**ດ້ານສັງຄົມ**ເຫັນວ່າ: ແບບສອບຖາມສາເຫດທີ່ມີຜົນຕໍ່ການປະລະການຮຽນຂອງນັກຮຽນຊັ້ນມັດທະຍົມ ຕອນຕົ້ນຢູ່ເມືອງບາຈຽງ ຈະເລີນສຸກ ແຂວງ ຈຳປາສັກໃນ ດ້ານສັງຄົມໃນສະຖານທີ່ການສຶກສາ ແມ່ນມີຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕາຖານຢູ່ໃນລະດັບໜ້ອຍສຸດ ເຊິ່ງມີ ($\overline{X} = 2.05$) ແລະ ($SD = 0{,}55$) ເມື່ອພິຈາລະນາແຕ່ລະຂໍ້, ຂໍ້ທີ່ມີສະເລ່ຍ ແລະ ຄ່າຜັນປ່ຽນມາດຕາຖານສູງສຸດໄດ້ແກ່ ການຄົມມະນາຄົມ ຫຼື ການເດີນທາງມາຮຽນບໍ່ສະດວກ ແມ່ນຢູ່ໃນລະດັບຫຼາຍ ເຊິ່ງມີຄ່າສະເລ່ຍ ($\overline{X} = 3.82$) ; ($SD = 0.50$) ຂໍ້ທີ່ມີຄ່າສະເລ່ຍຕ່ຳກວ່າໝູ່ແມ່ນ ການຖືກຂົ່ມຂູ່ ຫຼື ທຳຮ້າຍຈາກເພື່ອນນັກຮຽນ ແລະການທະເລາະວິວາດ ຫຼື ມີຄວາມຂັດແຍ້ງໃນສະຖານການສຶກສາ ຢູ່ໃນລະດັບໜ້ອຍສຸດເຊິ່ງມີ ($\overline{X} = 1.25$) ແລະ ($SD = 0.44$)

## 6. ຄວາມຮູ້ບຸນຄຸນ ( Acknowledgment)

ກ່ອນອື່ນຜູ້ຄົ້ນຄວ້າຂໍຕິລາຄາສູງ ແລະ ຮູ້ບຸນຄຸນມາຍັງຄູທີ່ປຶກສາ ທ່ານ ປອ. ແສງ ສຸລິຍາ ຈັນທະນາຄອນ ແລະ ຜູ້ຊ່ວຍຄູທີ່ປຶກສາ ປທ ນາງ ສົມຈິດ ວົງພະຈັນ ແລະ ປທ ນາງ ສຸດສະດາພອນ ສິງສີທາ ທີ່ອຸທິດສະຕິປັນຍາ, ຄວາມພະຍາຍາມ ແລະ ເວລາອັນມີຄ່າຊ່ວຍແນະນຳ ເຮັດໃຫ້ການຂຽນວິທະຍານິພົນຂອງ ຂ້າພະເຈົ້າມີຜົນສຳເລັດສູງ. ຂໍສະແດງຄວາມຂອບໃຈມາຍັງຄະນະພັກ, ຄະນະນຳ ພ້ອມດ້ວຍຄະນະຮັບຜິດຊອບຫຼັກສູດທີ່ຄະນະສຶກສາສາດ, ມະຫາວິທະຍາໄລ ຈຳປາສັກ ທີ່ໄດ້ອຳນວຍຄວາມສະດວກ ແລະ ໃຫ້ໂອກາດຜູ້ຄົ້ນຄວ້າໄດ້ສຶກສາຮຽນຮູ້ໃນຫຼັກສູດປະລິນຍາໂທ

ສຶກສາສາດ ສາຂາ ວິທະຍາສາດການສຶກສາ. ຕະຫຼອດທ່ານຄະນະກຳມະການປ້ອງກັນວິທະຍານິພົນ ທີ່ໄດ້ເສຍສະຫຼະເຫື່ອແຮງສະຕິປັນຍາ ໃຫ້ຄຳແນະນຳ ແລະ ມີຄຳເຫັນຕໍ່ວິທະຍານິພົນຂອງຂ້າພະເຈົ້າໄດ້ຮັບການປັບປຸງ ແລະ ມີຜົນສຳເລັດສູງ.

ຂໍສະແດງຄວາມຮູ້ບຸນຄຸນມາຍັງຄູ-ອາຈານທີ່ສິດສອນ ທີ່ໄດ້ຖ່າຍທອດຄວາມຮູ້ ແລະ ປະສົບການໃນແຕ່ລະວິຊາ ເຮັດໃຫ້ຜູ້ຄົ້ນຄວ້າໄດ້ພັດທະນາແນວຄວາມຄິດ ແລະ ຈິນຕະນາການໃໝ່ ເພື່ອນຳເອົາໄປຜັນຂະຫຍາຍພັດທະນາອົງການຈັດຕັ້ງຜູ້ຄົ້ນຄວ້າໃນອານາຄົດ. ຂໍສະແດງຄວາມຮັກແພງເພື່ອນມິດຮ່ວມຮຸ່ນທີ່ໄດ້ແລກປ່ຽນຮຽນຮູ້ປະສົບການທັງດ້ານວິຊາການ ແລະ ປະສົບການຊີວິດແກ່ຜູ້ຄົ້ນຄວ້າໄດ້ຮຽນຮູ້ຢ່າງເລິກເຊິ່ງ.

ຂໍຖືໂອກາດນີ້ ສະໄດ້ສະແດງຄວາມຮູ້ບຸນຄຸນມາຍັງອົງການຈັດຕັ້ງຂອງຜູ້ຄົ້ນຄວ້າ ຄືຫ້ອງການສຶກສາທິການ ແລະ ກິລາເມືອງບາຈຽງຈະເລີນສຸກ ທີ່ໄດ້ຊຸກຍູ້ສົ່ງເສີມ ແລະ ໃຫ້ໂອກາດຜູ້ຄົ້ນຄວ້າໄດ້ຍົກລະດັບວິຊາສະເພາະຂອງຕົນຈົນໄດ້ຮັບຜົນສຳເລັດສູງ.

ສຸດທ້າຍ, ຜູ້ຄົ້ນຄວ້າຂໍສະແດງຄວາມຮູ້ບຸນຄຸນມາຍັງພໍ່ແມ່, ຄອບຄົວພັນລະຍາ, ລູກ ແລະ ສັງຄົມເພື່ອນມິດຮັກແພງທີ່ໃຫ້ກຳລັງໃຈ ແລະ ໃຫ້ການສະໜັບສະໜູນຂ້າພະເຈົ້າສູ້ຊົນສຶກສາຮ່ຳຮຽນຈົນໄດ້ຮັບຜົນສຳເລັດໃນທຸກບາດກ້າວການສຶກສາຮ່ຳຮຽນໃນຕະຫຼອດສອງປີ ສະນັ້ນ, ຖ້າຫາກຂາດພາກສ່ວນ ແລະ ບຸກຄົນທີ່ສຳຄັນດັ່ງກ່າວມາ ຜູ້ຄົ້ນຄວ້າຄົງຈະບໍ່ຈົບການສຶກສາຄັ້ງນີ້ຢ່າງແນ່ນອນ.

## 7. ເອກະສານອ້າງອີງ


ກະຊວງສຶກສາທິການ ແລະ ກິລາ, (2020:28)ບົດ **ສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາການສຶກສາ ແລະກິລາປະຈຳສົກຮຽນ2019-2020ແລະແຜນພັດທະນາການສຶກສາແລະກິລາປະຈຳສົກຮຽນ 2020-2021**

ກະຊວງສຶກສາທິການ ແລະ ກິລາ, (2015). **ວິໄສທັດຮອດປີ 2030 ຍຸດທະສາດຮອດປີ 2030 ແລະ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີຄັ້ງທີ VIII (2016-2020).**

ກິດສະໜາ ສັກສຣີ . **ຈິດວິທະຍາການສຶກສາ.** ກຣຸງເທບ: ບຳຣຸງສາສນ, 1937.

ງານວິໄຈສະຖາບັນ ແລະ ສາລະສົນເທດ ກອງນະໂຍບາຍແລະແຜນ. (2011) **ລາຍງານສະຖິຕິການສຶກສາ ປະຈຳປີ ການສຶກສາ** 2011. ກຸງເທບ : ມະຫາວິທະຍາໄລເທັກໂນໂລຍີຣາດຊະມົງຄົນພະນະຄອນ.

ງານວິໄຈສະຖາບັນ ແລະ ສາລະສົນເທດ ກອງນະໂຍບາຍແລະແຜນ. (2012) **ລາຍງານສຖິຕິການສຶກສາ**

ບຸນໂຊຕິ ຊານາຍ ແລະອຸໄຣຣັກ ດຸນວັນນະ. (2011). **ການສຶກສາບັນຫາ ແລະ ສາເຫດການປະລະການຮຽນຂອງນັກຮຽນນັກສຶກສາ ວິທະຍາໄລເທັກນິກນະຄອນສຣີທຳມະຣາດ.** ລາຍງານວິໄຈ, ວິທະຍາໄລເທັກນິກນະຄອນສຣີທຳມະຣາດ.

ສົມຄິດ ຣັກສາຊັບ, ສຸພາພອນ ຕັນຈ້ອຍ ແລະວາດສະໜາ ດ້ວງເໝືອນ. (2014). **ສາເຫດການປະລະການຮຽນຂອງນັກສຶກສາມະຫາວິທະຍາໄລເທັກໂນໂລຢີຣາດຊະມົງຄົນກຣຸງເທບ.** ລາຍງານວິໄຈ, ມະຫາວິທະຍາໄລເທັກໂນໂລຢີຣາດຊະມົງຄົນກຣຸງເທບ.

ສັນໄຊ ກິຕິຍານັນ. (2010). **ປັດໄຈທີ່ມີອິດທິພົນຕໍ່ການປະລະການຮຽນຂອງນັກສຶກສາຄະນະວິທະຍາການ ຈັດການມະຫາວິທະຍາໄລຣາດຊະພັດການຈົນບຸຣີ.** ລາຍງານການວິໄຈ, ມະຫາວິທະຍາໄລຣາດຊະພັດການຈົນບຸຣີ.